ກຸ່ມບໍລິສັດ ພົງຊັບທະວີ
PHONGSUBTHAVY GROUP

ບົດສະຫຼຸບຫຍໍ້ກ່ຽວກັບການສະເໜີຊື້ຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຜູ້ສະເໜີຊື້ຮຸ້ນ: ບໍລິສັດ ພົງຊັບທະວີກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ ຜູ້ດຽວ
(ໂດຍ: ທ່ານ ພົງສະຫວັດ ເສນາພອນ)

ຈຳນວນຮຸ້ນທີ່ສະເໜີຊື້ທັງໝົດ: 403.032.887 ຮຸ້ນ
ຄາດຄະເນວັນຊື້-ຂາຍ: ວັນທີ 30 ກັນຍາ ເຖິງ 01 ຕຸລາ 2020

ກະກຽມໂດຍ: ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ

ບົດສະຫຼຸບຫຍໍ້ກ່ຽວກັບການສະເໜີຊື້ຮຸ້ນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ຜູ້ສະເໜີຊື້ຮຸ້ນ: ບໍລິສັດ ພົງສຸພັນທະວີກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ ຜູ້ດຽວ

(ໂດຍ: ທ່ານ ພົງສະຫວັດ ເສນາພອນ)

ຈຳນວນຮຸ້ນທີ່ສະເໜີຊື້ທັງໝົດ: 403.032.887 ຮຸ້ນ

ຄາດຄະເນວັນຊື້-ຂາຍ: ວັນທີ 30 ກັນຍາ ເຖິງ 01 ຕຸລາ 2020

ກະກຽມໂດຍ : ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ

ສາລະບານ

ນິຍາມຄຳສັບ 1

I. **ລາຍລະອຽດຂອງຜູ້ສະເໜີຊື້ຮຸ້ນ** 2

1. ຂໍ້ມູນກ່ຽວກັບການສະເໜີຊື້ຮຸ້ນ: 2
2. ປະຫວັດຄວາມເປັນມາຂອງບໍລິສັດສະເໜີຊື້ຮຸ້ນ: 2
3. ວັດຖຸປະສົງໃນການສະເໜີຊື້ຮຸ້ນ: 3
4. ທຸລະກິດຂອງກຸ່ມບໍລິສັດ 3
5. ໂຄງສ້າງຜູ້ຖືຮຸ້ນຂອງຜູ້ສະເໜີຊື້ຮຸ້ນ: 5
6. ແຜນການອະນາຄົດ 7
7. ປັດໄຈຄວາມສ່ຽງ: 8
8. ສະຫຼຸບຂໍ້ມູນຖານະທາງການເງິນ ແລະ ຜົນການດຳເນີນງານທີ່ສຳຄັນຂອງຜູ້ສະເໜີຊື້ຮຸ້ນ: 8
9. ຈຸດດີ ແລະ ຈຸດທ້າທ້າຍ 9
10. ພາລະຜູກພັນສຳຄັນຕ່າງ 10
11. ຂໍ້ມູນກ່ຽວກັບປະຫວັດການກະທຳຜິດທາງອາຍາ 10
12. ຂໍ້ຂັດແຍ່ງທາງກົດໝາຍທີ່ຍັງບໍ່ສິ້ນສຸດ 10
13. ແຫຼ່ງເງິນທຶນສຳລັບການຊຳລະການຊື້ຮຸ້ນ 11
14. ແຜນການຂາຍຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພາຍຫຼັງການຊື້ຮຸ້ນສຳເລັດ 11
15. ແຜນການເຄື່ອນໄຫວຂອງບໍລິສັດພາຍຫຼັງຊື້ຮຸ້ນສຳເລັດ 11
16. ຄວາມຮັບຜິດຊອບຕໍ່ສັງຄົມ 11
17. ບຸກຄະລາກອນ 12
18. ຂໍ້ມູນທີ່ປຶກສາດ້ານການເງິນ 12

II. **ລາຍລະອຽດຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ** 13

1. ຂໍ້ມູນກ່ຽວກັບບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ 13
2. ປະຫວັດຄວາມເປັນມາຂອງບໍລິສັດ 13
3. ປະເພດທຸລະກິດ 15
4. ການລົງທຶນຂອງບໍລິສັດ 15
5. ລາຍຊື່ 11 ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດກ່ອນການສະເໜີຊື້ຮຸ້ນ: 17
6. ລາຍຊື່ 12 ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດພາຍຫຼັງການສະເໜີຊື້ຮຸ້ນ: 18
7. ສະພາບໍລິຫານ: 18
8. ຜົນການດຳເນີນງານ ແລະ ຂໍ້ມູນຖານະທາງການເງິນ: 19

ນິຍາມຄຳສັບ

ຄຳສັບ	ຄວາມໝາຍ
ບໍລິສັດ ຫຼື ພຊທອ	ບໍລິສັດ ພົງຊັບທະວີກໍ່ສ້າງ ຂ໊ອທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ ຜູ້ດຽວ
EDL-Gen	ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ບໍລິສັດທີ່ປຶກສາດ້ານການເງິນ	ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
ສຄຄຊ	ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ
ຕລຊລ	ຕະຫຼາດ ຫຼັກຊັບລາວ
MOIC	ກະຊວງອຸດສາຫະກຳ ແລະ ການຄ້າ
ຮຸ້ນ	ຮຸ້ນສາມັນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ຈົດທະບຽນຢູ່ ຕລຊລ
ສະກຸນເງິນກີບ	ເງິນກີບແມ່ນສະກຸນເງິນທີ່ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ
ມູນຄ່າກຳນົດ	ມູນຄ່າຮຸ້ນຂອງບໍລິສັດມີມູນຄ່າເທົ່າກັນ ເຊິ່ງແຕ່ລະບໍລິສັດກຳນົດແຕກຕ່າງ
ສປປ ລາວ	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
MW	Mega watt
GWh	Kilowatt-hour
COD	Commercial Operation Date
HPP	Hydro Power Project
IPP	Independent Power Producers

ບົດສະຫຼຸບຫຍໍ້ກ່ຽວກັບການສະເໜີຊື້ຮຸ້ນ

I. ລາຍລະອຽດຂອງຜູ້ສະເໜີຊື້ຮຸ້ນ

1. ຂໍ້ມູນກ່ຽວກັບການສະເໜີຊື້ຮຸ້ນ:

ຜູ້ສະເໜີຊື້ຮຸ້ນ	:	ບໍລິສັດ ພົງຊັບທະວີກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ ຜູ້ດຽວ
ປະເພດທຸລະກິດ	:	ກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ, ກໍ່ສ້າງ-ສ້ອມແປງ ຂົວທາງ ແລະ ສຳຫຼວດ, ອອກແບບ ເຄຫາ, ຂົວທາງ ແລະ ຊົນລະປະທານ
ວັນທີສ້າງຕັ້ງ	:	2001
ສັນຍາລັກ	:	ພຊທວ
ສຳນັກງານໃຫຍ່	:	ບ້ານ ໜອງບົກໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ໃບທະບຽນວິສາຫະກິດເລກທີ	:	0938/ຈທວ, ລົງວັນ 13 ກັນຍາ 2018
ເລກປະຈຳຕົວຜູ້ເສຍອາກອນ	:	885221286-9-00
ທຶນຈົດທະບຽນ	:	15.000.000.000 ກີບ
ມູນຄ່າກຳນົດຮຸ້ນລະ	:	15.000 ກີບ
ຈຳນວນຮຸ້ນ	:	1.000.000 ຮຸ້ນ
ເວັບໄຊ	:	www.phongsupthavy.la
ໂທລະສັບ	:	(+856-20) 2234 5678 ,5534 5678
ແຟັກສ	:	(+856-21) 618 000, 618 088

2. ປະຫວັດຄວາມເປັນມາຂອງບໍລິສັດສະເໜີຊື້ຮຸ້ນ:

ກຸ່ມບໍລິສັດ ພົງຊັບທະວີ ໄດ້ກໍ່ຕັ້ງຂຶ້ນໃນປີ 2001 ໂດຍເລີ່ມຕົ້ນຈາກການດຳເນີນທຸລະກິດກໍ່ສ້າງ ແລະ ໄດ້ຮັບເໝົາກໍ່ສ້າງເສັ້ນທາງ ເຂດພູດອຍ ຈຳນວນຫຼາຍໂຄງການຈາກລັດຖະບານ.

ມາເຖິງປີ 2010, ກຸ່ມບໍລິສັດ ພົງຊັບທະວີ ໄດ້ປ່ຽນຮູບແບບ ສັນຍາຮັບເໝົາກໍ່ສ້າງ ແບບດັ່ງເດີມ ມາເປັນ ແບບທັນສະໄໝຂຶ້ນ ຄືຮູບແບບຮັບເໝົາກໍ່ສ້າງທັ້ງໝົດ ແລ້ວສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວເກັບເງິນຄືນຈາກເຈົ້າຂອງໂຄງການ ຫຼື ລັດຖະບານ, ຮູບແບບສັນຍາ ໄດ້ປະຕິບັດໃນໂຄງການຕ່າງໆເຊັ່ນ: ໂຄງການກໍ່ສ້າງເສັ້ນທາງ, ໂຄງການກໍ່ສ້າງອາຄານ ແລະ ອື່ນໆ ກັບພາກລັດ, ລັດວິສາຫະກິດ ແລະ ເອກະຊົນ ຄຽງຄູ່ກັນນັ້ນກໍ່ໄດ້ດຳເນີນທຸລະກິດ ດ້ານສັງຫາລິມະຊັບຕື່ມອີກ.

ໂຄງການກໍ່ສ້າງເຂື່ອນໄຟຟ້າພະລັງນ້ຳແຫ່ງທຳອິດຂອງ ກຸ່ມ ບໍລິສັດ ພິງຊັບທະວີ ໄດ້ເລີ່ມລົງມື ແລະ ພັດທະນາຂຶ້ນ ໃນປີ 2011 ຊຶ່ງເປັນໂຄງການທີ່ໄດ້ຮັບການສະໜັບສະໜູນຈາກພາກສ່ວນຕ່າງໆ ແລະ ຍັງເປັນໂຄງການທຳອິດທີ່ເປັນເຈົ້າ ຂອງເຂື່ອນໄຟຟ້າ ຂອງເອກະຊົນໃນປະເທດລາວ, ພ້ອມຍັງໄດ້ຢັ້ງຢືນເຖິງຄວາມສາມາດ ແລະ ຜົນສຳເລັດອັນຍິ່ງໃຫຍ່ ພ້ອມຍັງສົ່ງຜົນທີ່ດີເພື່ອສືບຕໍ່ໂຄງການອື່ນໆ, ມາຮອດປະຈຸບັນ ກຸ່ມ ບໍລິສັດ ພິງຊັບທະວີ ໄດ້ວາງແຜນພັດທະນາດ້ານ ພະລັງງານ ໃຫ້ສຳເລັດບໍ່ຕ່ຳກວ່າ 1,000 ເມັກກະວັດ ໃນປີ 2020 ໃນນັ້ນຈະລວມມີ ພະລັງງານຈາກນ້ຳ, ພະລັງງານຈາກ ແສງຕາເວັນ, ພະລັງງານຈາກລົມ ແລະ ພະລັງງານ ຈາກຖ່ານຫີນ.

ມາຮອດປີ 2014, ທາງກຸ່ມບໍລິສັດ ພິງຊັບທະວີໄດ້ຂະຫຍາຍສາຂາທຸລະກິດຕື່ມອີກເຊັ່ນ: ທຸລະກິດດ້ານການຄ້າ ແລະ ທຸລະກິດດ້ານກະສິກຳ ເຊິ່ງກໍ່ໄດ້ເລີ່ມພັດທະນາ ແລະ ເສີມຂະຫຍາຍອອກໄປເລື່ອຍໆ ມີຈຸດປະສົງ ກໍ່ເພື່ອຕອບສະ ໜອງແກ່ຄວາມຕ້ອງການຂອງສັງຄົມ.

3. ວັດຖຸປະສົງໃນການສະເໜີຊື້ຮຸ້ນ:

- ເພື່ອເປັນການລົງທຶນຂອງບໍລິສັດໃນອະນາຄົດ ເນື່ອງຈາກທາງບໍລິສັດມີໂຄງການເຂື່ອນໄຟຟ້າຈຳນວນໜຶ່ງທີ່ມີແຜນ ຈະເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນອະນາຄົດອັນໃກ້ນີ້;
- ເພື່ອສ້າງຄວາມເຂັ້ມແຂງທາງດ້ານການເງິນຂອງບໍລິສັດ ໃຫ້ມີຄວາມໝັ້ນຄົງ;
- ເປັນການກະຈາຍຄວາມສ່ຽງໃນການລົງທຶນຂອງບໍລິສັດ.

4. ທຸລະກິດຂອງກຸ່ມບໍລິສັດ:

- **ທຸລະກິດດ້ານກໍ່ສ້າງ**;

ທຸລະກິດກໍ່ສ້າງຂອງບໍລິສັດປະກອບດ້ວຍ ໂຄງການກໍ່ສ້າງຂົວທາງ - ຊົນລະປະທານ, ໂຄງການເຂື່ອນໄຟຟ້າ ແລະ ໂຄງການກໍ່ສ້າງອາຄານ. ໄລຍະທີ່ຜ່ານມາບໍລິສັດສຳເລັດໃນການກໍ່ສ້າງຂົວທາງ - ຊົນລະປະທານ ທັງໝົດ 22 ໂຄງການ ເຊິ່ງມີມູນຄ່າທັງໝົດ 1.305.362.527.594 ກີບ ແລະ ມີລາຍລະອຽດດັ່ງນີ້:

- ທັງສອງໂຄງການກໍ່ສ້າງເສັ້ນທາງທີ່ແຂວງ ອັດຕະປື ສປປ ລາວ, ມີຄວາມຍາວທັງໝົດ 100,78 ກມ, ກວ້າງ 7 ມ, ເປັນທາງດິນແດງຊຶ່ງໄລຍະເວລາຂອງສັນຍາ ເລີ່ມແຕ່ 15 ຕຸລາ 2007 ຫາ 15 ຕຸລາ 2010 ລວມ 30 ເດືອນ, ເຊິ່ງດຳເນີນວຽກງານໃນຮູບແບບສັນຍາເຊັ່ນ: ກໍ່ສ້າງສຳເລັດ, ສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວ ເກັບເງິນຈາກເຈົ້າຂອງໂຄງການຕາມພາຍຫຼັງ;
- ໂຄງການກໍ່ສ້າງເສັ້ນທາງລຽບຊາຍແດນລາວ ກຳປູເຈຍ, ທີ່ແຂວງ ຈຳປາສັກ ສປປ ລາວ, ມີຄວາມຍາວ 120 ກມ, ກວ້າງ 8 ແມັດ ເປັນເສັ້ນທາງປູແຮ່ ເລກທີສັນຍາ 2024/ຍທຂ.ຈສ. ໄລຍະເວລາຂອງສັນຍາ 36 ເດືອນ, ເລີ່ມແຕ່ 11 ກັນຍາ 2014, ເຊິ່ງດຳເນີນວຽກໃນຮູບແບບສັນຍາເຊັ່ນ: ກໍ່ສ້າງສຳເລັດສົ່ງມອບໃຫ້ເຈົ້າ ຂອງໂຄງການ ແລ້ວເກັບເງິນພາຍຫຼັງ;
- ໂຄງການກໍ່ສ້າງເສັ້ນທາງ 1 G ຈາກແຂວງ ສະຫວັນນະເຂດ ຫາ ແຂວງ ສາລະວັນ ສປປ ລາວ ມີຄວາມຍາວ ທັງໝົດ 53,5 ກມ, ກວ້າງ 8 ແມັດເປັນເສັ້ນທາງປູຢາງ 2 ຊັ້ນ, ອີງໃສ່ສັນຍາເລກທີ 410 A/ຂສຂ ໄລຍະ ເວລາການກໍ່ສ້າງ 48 ເດືອນ, ເລີ່ມແຕ່ 25 ມີນາ 2013,ເຊິ່ງດຳເນີນງານວຽກໃນຮູບແບບສັນຍາເຊັ່ນ: ກໍ່ສ້າງ ສຳເລັດ, ສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວເກັບເງິນພາຍຫຼັງ;

- ໂຄງການກໍ່ສ້າງ ບ້ານ ໜອງບົວທອງ ຫາ ໜອງບົກ, ນະຄອນຫຼວງວຽງຈັນ, ມີຄວາມຍາວ 5,3 ກມ, ກວ້າງ 23 ມ, ເປັນເສັ້ນທາງເບຕົ້ງເສີມເຫຼັກມີຄວາມໜາ 25 ຊມ, ຕາມສັນຍາເລກທີ 1890/ຍທຂ.ນວ ລົງ ວັນທີ 02 ມິຖຸນາ 2010, ໃນໄລຍະເວລາ 30 ເດືອນ ເຊິ່ງດຳເນີນວຽກງານໃນຮູບແບບສັນຍາເຊັ່ນ: ກໍ່ສ້າງ ສຳເລັດ, ສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວເກັບເງິນນຳເຈົ້າຂອງໂຄງການພາຍຫຼັງ;
- ໂຄງການກໍ່ສ້າງເສັ້ນທາງ ບ້ານ ໜອງບົວທອງ ຫາ ໜອງບົກ, ນະຄອນຫຼວງວຽງຈັນ, ມີຄວາມຍາວ 3,6 ກມ, ກວ້າງ 13 ມ, ເປັນເສັ້ນທາງເບຕົ້ງອັດສະຟານມີຄວາມໜາ 5 ຊມ, ຕາມສັນຍາເລກທີ 1890/ ຍທຂ.ນວ ລົງວັນທີ 02 ມິຖຸນາ 2010, ໃນໄລຍະເວລາ 30 ເດືອນ ເຊິ່ງດຳເນີນວຽກງານໃນຮູບແບບ ສັນຍາເຊັ່ນ: ກໍ່ສ້າງສຳເລັດ, ສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວເກັບເງິນຈາກເຈົ້າຂອງໂຄງການຕາມ ພາຍຫຼັງ;
- ໂຄງການກໍ່ສ້າງເສັ້ນທາງຈາກທ່າໂທມ ຫາ ບ້ານ ເມືອງງາມ, ທີ່ແຂວງ ຊຽງຂວາງ, ສປປ ລາວ, ມີຄວາມຍາວ ທັງໝົດ 32 ກມ, ກວ້າງ 8 ມ ເປັນປະເພດທາງ ປູຫີນແຮ່, ອີງໃສ່ສັນຍາເລກທີ 2489/ຍທຂ,ຊຂ ຊຶ່ງ ໄລຍະເວລາຂອງສັນຍາ 30 ເດືອນ ເລີ່ມແຕ່ 05 ທັນວາ 2013 ຫາ ວັນທີ 04 ມິຖຸນາ ເຊິ່ງໄດ້ດຳເນີນໃນ ຮູບແບບສັນຍາເຊັ່ນ: ກໍ່ສ້າງສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວເກັບເງິນຄືນຕາມທີຫຼັງ;
- ທັງສອງໂຄງການກໍ່ສ້າງເສັ້ນທາງທີ່ແຂວງ ໄຊສົມບູນ ສປປ ລາວ ຕາມສັນຍາເລກທີ 789/ຍທຂ.ຊບ, ລົງ ວັນທີ 19 ກຸມພາ 2015 ມີຄວາມຍາວທັງໝົດ1,676 ກມ, ກ້ວາງ 8 ມ ເປັນທາງເບຕົ້ງເສີມເຫຼັກ. ຕາມ ສັນຍາເລກທີ 1261/ຍທຂ.ຊບ, ລົງວັນທີ 28 ພຶດສະພາ 2015 ມີຄວາມຍາວ 19 ກມ, ກວ້າງ 7 ມ, ເປັນ ທາງປູຢາງ 02 ຊັ້ນ, ເຊິ່ງດຳເນີນວຽກໃນຮູບແບບສັນຍາເຊັ່ນ: ກໍ່ສ້າງສຳເລັດ,ສົ່ງມອບ ແລ້ວ ເກັບເງິນຄືນ ຈາກເຈົ້າຂອງໂຄງການຕາມທີຫຼັງ;
- ໂຄງການກໍ່ສ້າງເສັ້ນທາງປູຢາງ ແລະ ປູແຮ່ ທາງທີ່ ແຂວງ ໄຊສົມບູນ, ສປປ ລາວ. ຕາມສັນຍາເລກທີ 1261/ຍທຂ.ຊບ, ລົງວັນທີ 28 ພຶດສະພາ 2015 ມີຄວາມຍາວທັງໝົດ 19 ກມ, ກວ້າງ 7 ມ, ເປັນທາງ ປູຢາງ 02 ຊັ້ນມູນຄ່າສັນຍາ 44.128.766.216 ກີບ;
- ໂຄງການກໍ່ສ້າງຊົນລະປະທານ ຫ້ວຍອາໄກ ເມືອງ ພິນ ແຂວງສະຫວັນນະເຂດ ມູນຄ່າສັນຍາ 192,415,857,204 ກີບ ປະຈຸບັນກຳລັງກໍ່ສ້າງມີຄວາມຄືບໜ້າ 56%;
- ໂຄງການກໍ່ສ້າງເສັ້ນທາງເບຕົ້ງເສີມເຫຼັກ ດົງນາທອງ - ໜອງພະຍາ, ນະຄອນຫຼວງວຽງຈັນ, ມູນຄ່າສັນຍາ: 376,510,438,227 ກີບ ປະຈຸບັນກຳລັງກໍ່ສ້າງໄດ້ປະມານ 19%.

- **ທຸລະກິດດ້ານພະລັງງານ**;

ທຸລະກິດພະລັງງານປະກອບດ້ວຍ ເຂື່ອນໄຟຟ້າພະລັງງານນ້ຳ, ພະລັງງານແສງອາທິດ, ໂຮງງານໄຟຟ້າຖ່ານຫີນ, ພະລັງງານລົມ ແລະ ສາຍສົ່ງໄຟຟ້າໄປ ສສ ຫວຽດນາມ ຈາກບັນດາໂຄງການເຂື່ອນພົງຊັບ. ໄລຍະຜ່ານມາບໍລິສັດສຳເລັດ ມີ ໂຄງການເຂື່ອນໄຟຟ້າພະລັງງານນ້ຳທັງໝົດ 8 ໂຄງການ, ມີກຳລັງການຕິດຕັ້ງທັງໝົດ 223,4 MW ເຊິ່ງໃຊ້ທຶນທັງ ໝົດ 459.152 ລ້ານໂດລາສະຫະລັດ ໂດຍມີລາຍລະອຽດດັ່ງນີ້:

Item	Name of HPP	Location (Province)	Capacity MWh	Annual Energy GWh	Started Date	Finished Date	Duration (month)	Remarks
1	XeNamnoy1	Attapue	14,8	70,118	5/12/2011	28/02/2014	26	COD
2	NamNgiep 3A	Xiengkuang	44	159,67	14/05/2011	20/08/2014	38	COD
3	NamSane 3B	Xaysomboun	45	177,5	8/8/2012	15/08/2015	36	COD
4	XeNamnoy 6	Champasack	5	27	11/11/2013	20/10/2015	23	COD
5	NamSane 3A	Xaysomboun	69	277	8/8/2012	29/01/2016	40	COD

6	NamSo	Xaysomboun	7,5	29,02	1/11/2013	5/9/2016	35	COD
7	NanPern 1	Huaphan	25,6	122,94	30/04/2013	10/10/2018	60	COD
8	Nan Kap	Xaysoomboun	12,5	54,62	28/05/2016	24/05/2019	36	COD

ແຫຼ່ງຂໍ້ມູນ: ບົດລາຍງານຂອງບໍລິສັດ

ພະລັງງານແສງອາທິດ ມີ 1 ໂຄງການ ເຊິ່ງມີກຳລັງການຕິດຕັ້ງທັງໝົດ 39 MW ແລະ ໃຊ້ທຶນທັງໝົດ 42,8 ລ້ານ ໂດລາສະຫະລັດ ມີລາຍລະອຽດດັ່ງລຸ່ມນີ້:

Project Name	Install capacity (MW)	Yearly energy (GWh)	Construction (D.M.Y)	COD (D.M.Y)	Investment cost (Mil.USD)	Location (Province)
B-Solar Song Luy 1 (Vietnam)	39	78,15	23/09/2018	13/05/2019	42,80	Binh Thuan (Vietnam)

ແຫຼ່ງຂໍ້ມູນ: ບົດລາຍງານຂອງບໍລິສັດ

ສຳລັບໂຮງງານໄຟຟ້າຖ່ານຫີນ, ພະລັງງານລົມ ແລະ ສາຍສົ່ງໄຟຟ້າໄປ ສສ ຫວຽດນາມ ກຳລັງຢູ່ໃນຂັ້ນຕອນການ ດຳເນີນງານ ກັບ ພາກສ່ວນທີ່ກ່ຽວຂ້ອງ.

- **ທຸລະກິດດ້ານການຄ້າ**;

ໄລຍະທີ່ຜ່ານມາທຸລະກິດການຄ້າໄດ້ເນັ້ນໃສ່ອຸດສາຫະກຳທ່ອງທ່ຽວ, ການຄ້າໄມ້, ການຄ້ານ້ຳມັນ, ການ ບໍລິການໂຮງແຮມ ແລະ ຜະລິດສິລິຄອນ ຢູ່ແຂວງ ຊຽງຂວາງ ເພື່ອແປຮູບເປັນຜະລິດຕະພັນສຳລັບການສົ່ງອອກ.

- **ທຸລະກິດອະສັງຫາລິມະຊັບ;**

ໄດ້ຈັດຕັ້ງປະຕິບັດສຳເລັດການຈັດຊື້ທີ່ດິນ ໃນນະຄອນຫຼວງວຽງຈັນໄດ້ແລ້ວປະມານ 583,000 m2 (58,3 ເຮັກຕາ) ແລະ ໄດ້ຂາຍອອກໄປແລ້ວປະມານ 40%. ໃນອີກ 2 ປີ ຂ້າງໜ້າພວກເຮົາຄາດວ່າຈະຈັດຊື້, ຈັດຫາໃຫ້ໄດ້ໂດຍ ເພີ່ມຂຶ້ນເປັນປະມານ 1.166.000 m2 (116,6 ເຮັກຕາ) ຢູ່ທີ່ນະຄອນຫຼວງວຽງຈັນ.

- **ທຸລະກິດກະສິກຳ.**


ໄດ້ຈັດຕັ້ງປະຕິບັດການປູກກາເຟ ທີ່ເມືອງ ປາກຊ່ອງ, ແຂວງ ຈຳປາສັກ ສປປ ລາວ ໄດ້ສຳເລັດແລ້ວ ປະມານ 5 ເຮັກຕາ ໃນຈຳນວນພື້ນທີ່ 120 ເຮັກຕາ ຕາມແຜນເບື້ອງຕົ້ນ, ປູກຖົ່ວລຽນ ຢູ່ແຂວງ ອັດຕະປື ໄດ້ປະມານ 30% ເຊິ່ງ ຕາມແຜນຈະປູກຢູ່ 200 ກວ່າເຮັກຕາ ແລະ ປັດຈຸບັນກຳລັງສຶກສາຄວາມເປັນໄປໄດ້ໃນການລ້ຽງສັດຢູ່ແຂວງ ຄຳມ່ວນ.

5. ໂຄງສ້າງຜູ້ຖືຮຸ້ນຂອງຜູ້ສະເໜີຊື້ຮຸ້ນ:


ລຳດັບ	ຜູ້ຖືຮຸ້ນ	ຈຳນວນຮຸ້ນ	(%)
1	ທ່ານ ຟົງສະຫວັດ ເສນາພອນ	1.000.000	100
	ລວມ	**1.000.000**	**100**

ໝາຍເຫດ: ມູນຄ່າກຳນົດຮຸ້ນລະ 15.000 ກີບ ແລະ ມີຜູ້ຖືຮຸ້ນພຽງຜູ້ດຽວ ເນື່ອງຈາກບໍລິສັດດຳເນີນທຸລະກິດໃນຮູບແບບຈຳກັດຜູ້ດຽວ.

❖ ຮູບແບບທຸລະກິດ:



❖ ໂຄງຮ່າງການຈັດຕັ້ງ:



❖ **ສະພາບໍລິຫານ:**

ລຳດັບ	ລາຍຊື່	ຕຳແໜ່ງ
1	ທ່ານ ພິງສະຫວັດ ເສນາພອນ	ປະທານສະພາບໍລິຫານ
2	ທ່ານ ບຸນທ່ຽງ ດວງປະເສີດ	ຮອງປະທານສະພາບໍລິຫານ
3	ທ່ານ ນາງ ວຽງສະຫວັນ ເສນາພອນ	ຮອງປະທານສະພາບໍລິຫານ

❖ **ຄະນະຜູ້ບໍລິຫານ:**

ລຳດັບ	ລາຍຊື່	ຕຳແໜ່ງ
1	ທ່ານ ສົມຣັດ ເມກອາກາດ	ຜູ້ອຳນວຍການໃຫຍ່
2	ທ່ານ ຄຳຕັນ ວົງພັນສີປະເສີດ	ຮອງຜູ້ອຳນວຍການໃຫຍ່

ໝາຍເຫດ: ສຳລັບຄະນະກຳມະການອື່ນໆ ບໍ່ມີ ເນື່ອງຈາກບໍລິສັດດຳເນີນທຸລະກິດໃນຮູບແບບຈຳກັດຜູ້ດຽວ.

6. ແຜນການອະນາຄົດ:

– **ເຂື່ອນໄຟຟ້າ ພະລັງງານນ້ຳ**

ປັດຈຸບັນກຳລັງສຶກສາຄວາມເປັນໄປໄດ້ 19 ໂຄງການຢູ່ແຂວງ ຊຽງຂວາງ, ແຂວງ ຫົວພັນ, ແຂວງ ໄຊສົມບູນ ແຂວງ ສະຫວັນນະເຂດ, ແຂວງ ເຊກອງ ແລະ ແຂວງ ອັດຕະປື ເຊິ່ງຄາດວ່າຈະມີກຳລັງການຜະລິດທັງໝົດ 904,5 MW ໃຊ້ເງິນລົງທຶນທັງໝົດ 1.447.200.000 ໂດລາສະຫະລັດ.

– **ພະລັງງານແສງອາທິດ**

ປັດຈຸບັນກຳລັງສຶກສາຄວາມເປັນໄປໄດ້ 7 ໂຄງການຢູ່ແຂວງ ໄຊສົມບູນ, ແຂວງ ຫົວພັນ , ແຂວງ ສະຫວັນນະເຂດ, ແຂວງ ເຊກອງ, ແຂວງ ອັດຕະປື ແລະ ແຂວງ ວຽງຈັນ ເຊິ່ງຄາດວ່າຈະມີກຳລັງການຜະລິດທັງໝົດ 760 MW ໃຊ້ເງິນລົງທຶນທັງໝົດ 684.000.000 ໂດລາສະຫະລັດ.

– **ໂຮງງານໄຟຟ້າຖ່ານຫີນ**

ປັດຈຸບັນກຳລັງສຶກສາຄວາມເປັນໄປໄດ້ 2 ໂຄງການຢູ່ ແຂວງ ຫົວພັນ ແລະ ແຂວງ ຊຽງຂວາງ ເຊິ່ງຄາດວ່າຈະມີກຳລັງການຜະລິດທັງໝົດ 520 MW ໃຊ້ເງິນລົງທຶນທັງໝົດ 468.000.000 ໂດລາສະຫະລັດ.

– **ພະລັງງານລົມ**

ປັດຈຸບັນກຳລັງສຶກສາຄວາມເປັນໄປໄດ້ 2 ໂຄງການຢູ່ ແຂວງ ຄຳມ່ວນ ແລະ ແຂວງ ບໍລິຄຳໄຊ ເຊິ່ງຄາດວ່າຈະມີກຳລັງການຜະລິດທັງໝົດ 1.300 MW ໃຊ້ເງິນລົງທຶນທັງໝົດ 1.560.000.000 ໂດລາສະຫະລັດ.

ນອກຈາກນັ້ນ ບໍລິສັດຍັງກຳລັງສຶກສາຄວາມເປັນໄປໄດ້ໃນການລົງທຶນໃສ່ບໍ່ແຮ່, ໂຮງງານ ສີລິຄອນ, ໂຮງງານ ເບຍ, ໂຄງການສວນທຸລຽນ, ໂຄງການປູກໄມ້, ໂຄງການພັດທະນາແຫຼ່ງທ່ອງທ່ຽວ, ໂຄງການການຄ້າ ແລະ ອື່ນໆ ເຊິ່ງ ຄາດວ່າຈະໄດ້ນຳໃຊ້ເງິນທຶນຫຼາຍລ້ານໂດລາສະຫະລັດ.

7. **ປັດໄຈຄວາມສ່ຽງ:**

- **ຄວາມສ່ຽງໃນການດຳເນີນທຸລະກິດ**

– ຄວາມສ່ຽງຈາກຄວາມບໍ່ແນ່ນອນຂອງລາຍໄດ້ ແລະ ຜົນການດຳເນີນງານ;
– ຄວາມສ່ຽງຈາກການຂາດແຄນແຮງງານ;
– ຄວາມສ່ຽງໃນການຜັນຜວນຂອງລາຄາວັດສະດຸກໍ່ສ້າງ ແລະ ການຂາດແຄນຂອງວັດສະດຸກໍ່ສ້າງ;
– ຄວາມສ່ຽງຈາກການເພິ່ງພາວຽກງານໂຄງການພາກລັດ.

- **ຄວາມສ່ຽງທາງດ້ານການເງິນ**

– ຄວາມສ່ຽງຈາກການໄດ້ຮັບຊຳລະເງິນຈາກເຈົ້າຂອງໂຄງການລ່າຊ້າ;
– ຄວາມສ່ຽງຈາກການຜັນຜວນຂອງອັດຕາແລກປ່ຽນ;
– ຄວາມສ່ຽງຈາກອັດຕາດອກເບ້ຍເງິນກູ້;
– ຄວາມສ່ຽງດ້ານຄວາມພຽງພໍຂອງເງິນທຶນໝຸນວຽນ;
– ຄວາມສ່ຽງຈາກພາວະເສດຖະກິດຖົດຖອຍ.

- **ຄວາມສ່ຽງໃນການຄຸ້ມຄອງບໍລິຫານ**

– ຄວາມສ່ຽງດ້ານການຄຸ້ມຄອງບໍລິຫານໂດຍຜູ້ຖືຮຸ້ນຜູ້ດຽວ;
– ຄວາມສ່ຽງຈາກການຖືຮ້ອງຟ້ອງດຳເນີນຄະດີຕາມກົດໝາຍຫາກໂຄງການມີບັນຫາ.

- **ຄວາມສ່ຽງຈາກພາວະເໜືອການຄວບຄຸມ**

– ຄວາມສ່ຽງຈາກການແຜ່ລະບາດຂອງພະຍາດ Covid-19;
– ຄວາມສ່ຽງຈາກໄພພິບັດຈາກທຳມະຊາດ.

8. **ສະຫຼຸບຂໍ້ມູນຖານະທາງການເງິນ ແລະ ຜົນການດຳເນີນງານທີ່ສຳຄັນຂອງຜູ້ສະເໜີຊື້ຮຸ້ນ:**

ເນື້ອໃນ (ຫົວໜ່ວຍ: ລ້ານກີບ)	2017	2018	2019
ລວມຊັບສິນບໍ່ໝຸນວຽນ	758.467	798.753	776.280
ລວມຊັບສິນໝຸນວຽນ	3.565.807	3.650.007	5.161.186
ລວມສ່ວນຊັບສິນ	**4.324.273**	**4.448.760**	**5.937.466**
ລວມໜີ້ສິນບໍ່ໝຸນວຽນ	2.365.761	2.492.088	2.358.905
ລວມໜີ້ສິນໝຸນວຽນ	1.044.477	1.404.491	1.763.207
ລວມສ່ວນໜີ້ສິນ	**3.410.238**	**3.896.580**	**4.122.113**
ລວມສ່ວນເຈົ້າຂອງ	**914.035**	**552.180**	**1.815.353**
ລວມລາຍຮັບ	1.104.676	87.641	1.489.771
ຕົ້ນທຶນການຂາຍ	402.429	60.827	22.727

EBITDA	612.261	(48.505)	1.463.902
EBIT	605.429	(63.504)	1.448.337
ກຳໄລສຸດທິ	**495.727**	**(155.473)**	**1.344.717**

ໃບລາຍງານກະແສເງິນສົດ (ຫົວໜ່ວຍ: ລ້ານກີບ)	2017	2018	2019
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ	(749.615)	784.320	(61.753)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ	188.111	644.760	234.797
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ	603.634	126.327	(133.183)
ເງິນສົດທ້າຍປີ	**143.801**	**130.568**	**170.429**

ອັດຕາສ່ວນການເງິນທີ່ສຳຄັນ	2017	2018	2019
Current ratio (x)	3,41	2,60	2,93
ROA (%)	11,46	(3,49)	22,65
ROE (%)	54,24	(28,16)	74,07
DE (x)	3,73	7,06	2,27
EPS (LAK)*	495.727	(155.473)	1.344.717
BV (LAK)*	914.035	552.180	1.815.353
EBITDA margin (%)	55,42	(55,35)	98,26
EBIT margin (%)	54,81	(72,46)	97,22
Net profit margin (%)	44,88	(177,40)	90,26

ໝາຍເຫດ: 1. ເອກະສານລາຍງານຂອງບໍລິສັດກ່ອນການກວດສອບ ປີ 2017-2019.

***** ມູນຄ່າກຳນົດຮຸ້ນລະ 15.000 ກີບ ແລະ ມີຈຳນວນ 1.000.000 ຮຸ້ນ.

9. ຈຸດດີ ແລະ ຈຸດທ້າທ້າຍ

<u>ຈຸດດີ :</u>

1. ບໍລິສັດ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກລັດຖະບານລາວ ແລະ ສິ່ງເສີມໃຫ້ການສະໜັບສະໜຸນ ບໍລິສັດໃຫ້ໄດ້ດຳເນີນຂະແໜງພະລັງງານ;
2. ເປັນໜຶ່ງໃນສີ່ບໍລິສັດຊັ້ນນຳຂອງ ສປປ ລາວ;
3. ມີພາມະກົນຈັກທີ່ທັນສະໄໝ ສຳລັບວຽກການກໍ່ສ້າງ;
4. ປັດຈຸບັນ ບໍລິສັດ ມີສາຍພົວພັນອັນດີງາມ ກັບ ທາງ ສສ ຫວຽດນາມ ໂດຍສະເພາະແມ່ນລັດວິສາຫະ ກິດໄຟຟ້າຫວຽດນາມ (EVN), ມັນຈະສ້າງຄວາມສະດວກໃນການເຈລະຈາຊື້-ຂາຍໄຟຟ້າໄປຍັງ ສສ ຫວຽດນາມ.
5. ມີຖານະທາງການເງິນທີ່ໝັ້ນຄົງ;

6. ມີພາບລັກທີ່ດີໃນສັງຄົມ;
7. ເປັນບໍລິສັດ ເອກະຊົນ ພາຍໃນ, ທີ່ມີບຸກຄະລາກອນສ່ວນໃຫຍ່ເປັນຄົນລາວ.

<u>ຈຸດທ້າທ້າຍ:</u>

1. ການເຂົ້າຫາແຫຼ່ງທຶນເພື່ອມາພັດທະນາໂຄງການທີ່ມີຢູ່ ແມ່ນຍັງບໍ່ພຽງພໍຕໍ່ຄວາມຕ້ອງການ;
2. ເຄືອຂ່າຍຍັງຈຳກັດຢູ່ແຕ່ປະເທດອ້ອມຂ້າງ;
3. ຍັງຂາດບຸກຄະລາກອນທີ່ມີມາດຕະຖານສາກົນ;
4. ທຸລະກິດສ່ວນໃຫຍ່ຍັງຕິດພັນກັບໂຄງການຂອງລັດຖະບານ;
5. ບໍລິສັດຍັງເປັນບໍລິສັດຈຳກັດຜູ້ດຽວ ເຊິ່ງພາບລັກໃນເວທີສາກົນຍັງບໍ່ທັນມີຄວາມໂດດເດັ່ນ;
6. ໂຄງການກໍ່ສ້າງບາງຄັ້ງກໍ່ມີການຊັກຊ້າເນື່ອງຈາກສະພາບອາກາດບໍ່ອຳນວຍ.

10. ພາລະຜູກພັນສຳຄັນຕ່າງ

ປີ 2019, ບໍລິສັດມີພາລະຜູກພັນທີ່ຕິດພັນກັບໜີ້ຕ້ອງສົ່ງ ແລະ ໜີ້ຕ້ອງຮັບ, ເງິນກູ້ຢືມ ດັ່ງລາຍລະອຽດຕໍ່ໄປນີ້:

- ໜີ້ຕ້ອງສົ່ງ ມູນຄ່າທັງໝົດ 1.763 ຕື້ກີບ ເຊິ່ງປະກອບດ້ວຍ ໜີ້ຕ້ອງສົ່ງດ້ານການຄ້າ ແລະ ໜີ້ຕ້ອງສົ່ງບໍລິສັດໃນເຄືອ;
- ເງິນກູ້ ມູນຄ່າທັງໝົດ 2.359 ຕື້ກີບ ເຊິ່ງປະກອບດ້ວຍ ເງິນກູ້ຈາກສະຖາບັນການເງິນ ແລະ ເງິນກູ້ຈາກກຳມະການ;
- ໜີ້ຕ້ອງຮັບມູນຄ່າທັງໝົດ 4.347 ຕື້ກີບ ເຊິ່ງປະກອບດ້ວຍ ລູກໜີ້ຈາກການກໍ່ສ້າງ, ລູກໜີ້ຈາກບໍລິສັດໃນເຄືອ, ລູກໜີ້ການຄ້າ, ລູກໜີ້ກຳມະການ ແລະ ລູກໜີ້ອື່ນໆ.

11. ຂໍ້ມູນກ່ຽວກັບປະຫວັດການກະທຳຜິດທາງອາຍາ

ບໍລິສັດໄດ້ດຳເນີນທຸລະກິດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ. ນັບແຕ່ເລີ່ມຕົ້ນດຳເນີນທຸລະກິດຈົນຮອດປັດຈຸບັນ, ຜູ້ສະເໜີຊື້ຮຸ້ນ ແລະ ຜູ້ບໍລິຫານຂອງຜູ້ສະເໜີຊື້ຮຸ້ນແມ່ນ ບໍ່ມີປະຫວັດການກະທຳຜິດທາງອາຍາ ແລະ ເປັນບຸກຄົນລົ້ມລະລາຍ.

12. ຂໍ້ຂັດແຍ່ງທາງກົດໝາຍທີ່ຍັງບໍ່ສິ້ນສຸດ

ປັດຈຸບັນ, ຜູ້ສະເໜີຊື້ຮຸ້ນ ແລະ ຜູ້ບໍລິຫານຂອງຜູ້ສະເໜີຊື້ຮຸ້ນແມ່ນ ບໍ່ມີຄະດີ ຫຼື ຂໍ້ຂັດແຍ່ງທາງກົດໝາຍສຳຄັນທີ່ຍັງບໍ່ສິ້ນສຸດ ເຊິ່ງອາດມີຜົນກະທົບດ້ານລົບຕໍ່ຖານະການເງິນ, ຜົນການດຳເນີນງານ ແລະ ການດຳເນີນທຸລະກິດຂອງຜູ້ສະເໜີຊື້ຮຸ້ນ. ເຖິງຢ່າງໃດກໍຕາມ, ການດຳເນີນໂຄງການກໍ່ສ້າງຕ່າງໆ ຂອງບໍລິສັດໃນໄລຍະທີ່ຜ່ານມາ ແມ່ນມີປະຊາຊົນ

ຈຳນວນໜຶ່ງທີ່ໄດ້ຮັບຜົນສະທ້ອນຈາກການດຳເນີນໂຄງການ ຕາມແຜນການພັດທະນາພື້ນຖານໂຄງລ່າງທາງເສດຖະກິດຂອງລັດຖະບານແຫ່ງ ສປປ ລາວ ເຊິ່ງບັນຫາດັ່ງກ່າວແມ່ນໄດ້ຖືກໄກ່ເກ່ຍດ້ວຍຄວາມປານີປານອມ ແລະ ໄດ້ຊົດເຊີຍໃຫ້ກັບປະຊາຊົນຢ່າງເໝາະສົມ ພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ ເຊິ່ງເຫັນວ່າປະຊາຊົນກຸ່ມຜູ້ທີ່ໄດ້ຮັບຜົນກະທົບຕາມທີ່ໄດ້ກ່າວມາຂ້າງເທິງນັ້ນ ມີຄວາມເພິ່ງພໍໃຈ ໃນການຊົດເຊີຍ.

13. ແຫຼ່ງເງິນທຶນສຳລັບການຊຳລະການຊື້ຮຸ້ນ

ສຳລັບແຫຼ່ງເງິນທຶນທີ່ຜູ້ສະເໜີຊື້ຮຸ້ນນຳມາຊື້ຮຸ້ນໃນຄັ້ງນີ້ແມ່ນ ໄດ້ນຳໃຊ້ເງິນທຶນຂອງບໍລິສັດພາຍໃນກຸ່ມ.

14. ແຜນການຂາຍຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພາຍຫຼັງການຊື້ຮຸ້ນສຳເລັດ

ເນື່ອງຈາກບໍລິສັດມີແຜນໄລຍະຍາວໃນການສ້າງຄວາມເຂັ້ມແຂງໃຫ້ທຸລະກິດພາຍໃນກຸ່ມ ແລະ ບໍລິສັດມີແຜນທີ່ຈະນຳເອົາບໍລິສັດພາຍໃນກຸ່ມທີ່ມີສັກກະຍະພາບເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວໃນອະນາຄົດ. ດັ່ງນັ້ນ, ບໍລິສັດຈຶ່ງບໍ່ມີແຜນໃນການຂາຍຮຸ້ນ ຫຼື ໂອນຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໃຫ້ກັບບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ.

15. ແຜນການເຄື່ອນໄຫວຂອງບໍລິສັດພາຍຫຼັງຊື້ຮຸ້ນສຳເລັດ

- **ທຸລະກິດພາຍໃນກຸ່ມ**: ສະເພາະແຜນການດຳເນີນທຸລະກິດຂອງບໍລິສັດແມ່ນຈະດຳເນີນໄປຕາມກົນໄກ ແລະ ແຜນການທີ່ວາງໄວ້ເປັນປົກກະຕິ.
- **ອັດຕາສ່ວນການຖືຮຸ້ນໃນບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ:** ບໍລິສັດອາດຈະເຈລະຈາເພື່ອໃຫ້ຕົວແທນຂອງບໍລິສັດສາມາດໄປນັ່ງເປັນສະມາຊິກສະພາບໍລິຫານ ຫຼື ຄະນະບໍລິຫານງານ ເນື່ອງຈາກ "ພຊທວ" ຈະກາຍເປັນຜູ້ຖືຮຸ້ນລາຍໃຫຍ່ອັນດັບທີ່ສອງຈາກ ລັດວິສາຫະກິດໄຟຟ້າລາວ ແຕ່ຍັງຮັກສາຮູບແບບດຳເນີນທຸລະກິດໄວ້ຄືເກົ່າ ຫຼື ອາດຈະມີການປຶກສາຫາລືກັນເພີ່ມເຕີມພາຍຫຼັງທີ່ຂະບວນການຊື້ຮຸ້ນສຳເລັດ ເພື່ອນຳເອົາພະລັງງານທົດແທນມາເປັນທຸລະກິດພາຍໃນ "ຜ-ຟຟລ" ໃນການສ້າງລາຍຮັບໃຫ້ບໍລິສັດໃນອະນາຄົດ.

16. ຄວາມຮັບຜິດຊອບຕໍ່ສັງຄົມ

ບໍລິສັດມຸ່ງໝັ້ນໃນການສ້າງຄຸນຄ່າຂອງອົງກອນຮ່ວມກັບການພັດທະນາເສດຖະກິດ, ສິ່ງແວດລ້ອມ ແລະ ສະພາບຄວາມເປັນຢູ່ຂອງສັງຄົມ ຕາມກົນລະຍຸດຂອງອົງກອນດ້ານການພັດທະນາແບບຍັ່ງຍືນ ເຊິ່ງໄລຍະທີ່ຜ່ານມາ ບໍລິສັດກໍ່ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມມາຕະຫຼອດ ດັ່ງມີລາຍລະອຽດລຸ່ມນີ້:

- ມອບໜ້າກາກອະນາໄມ, ຊຸດປ້ອງກັນພະຍາດ 3M ຈຳນວນ 200 ຊຸດ, ເຄື່ອງອັກແທກໄຂ້ຈຳນວນ 150 ເຄື່ອງແລະ ຖົງມືອະນາໄມຈຳນວນ 10 ແກັດ ມູນຄ່າທັງໝົດປະມານ 1,48 ຕື້ກີບ;
- ມອບອຸປະກອນເຄື່ອງຊ່ວຍຫາຍໃຈຄົບຊຸດໃຫ້ແກ່ລັດຖະບານ ເພື່ອກຽມພ້ອມຮັບໃຊ້ໃນການຊ່ວຍເຫຼືອຜູ້ປ່ວຍພະຍາດ Covid-19 ຈຳນວນ 5 ຊຸດ;
- ມອບໜ້າກາກອະນາໄມຜ່ານສະຖານທູດຈີນ ຈຳນວນໜຶ່ງລ້ານກັບ;
- ມອບເງິນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ 4 ແຂວງພາກໃຕ້ ມູນຄ່າ 2 ຕື້ກີບ;
- ມອບລົດພະຍາບານໃຫ້ແກ່ກະຊວງສາທາລະນະສຸກ;
- ມອບເງິນຊ່ວຍເຫຼືອໃນການສ້າງຕັ້ງໂຮງງານນ້ຳດື່ມ ແລະ ລົດໜຶ່ງຄັນໃຫ້ກັບກອງພົນທີ່ 2 ມູນຄ່າ 500 ລ້ານກີບ;
- ປະກອບສ່ວນໃນການເປີດກອງປະຊຸມໃຫຍ່ຄັ້ງທີ IX ມູນຄ່າ 100 ລ້ານກີບ;
- ຊ່ວຍເຫຼືອໃນການພັດທະນາແຂວງບໍ່ແກ້ວມູນຄ່າ 1,25 ຕື້ກີບ;
- ນອກຈາກນັ້ນຍັງໄດ້ມອບເງິນສົດໃຫ້ກັບແຕ່ລະແຂວງໃນທົ່ວປະເທດເພື່ອຊ່ວຍເຫຼືອສັງຄົມ ຕາມເງື່ອນໄຂຕົວຈິງ.

17. ບຸກຄະລາກອນ

ບໍລິສັດໃຫ້ຄວາມສຳຄັນທີ່ສຸດຕໍ່ຊີວິດການເປັນຢູ່ຂອງບຸກຄະລາກອນ ເພື່ອເຮັດໃຫ້ເຂົາເຈົ້າມີຊີວິດຄວາມເປັນຢູ່ທີ່ດີຂຶ້ນ ເພື່ອຊຸກຍູ້ໃຜ້ພະນັກງານທຸກຄົນມີຄວາມກະຕືລືລົ້ນ ແລະ ຫ້າວຫັນໃນການປະຕິບັດງານຂອງຕົນຢ່າງເຕັມທີ່. ປັດຈຸບັນ ບໍລິສັດມີພະນັກງານທັງໝົດ 457 ຄົນ ໃນນັ້ນເປັນຜູ້ຍິງ 101 ຄົນ.

18. ຂໍ້ມູນທີ່ປຶກສາດ້ານການເງິນ

- ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
- ອາຄານ ຕະຫຼາດຫຼັກຊັບລາວ ຊັ້ນ 5, ຖະໜົນກຳແພງເມືອງ (T4), ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
- ໂທລະສັບ: (+856-21) 265461-4
- ແຟັກ: (+856-21) 265465-6
- ເວັບໄຊ: www.lxs.com.la

II. ລາຍລະອຽດຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

1. ຂໍ້ມູນກ່ຽວກັບບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ:

ຮຸ້ນສາມັນ	:	ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ປະເພດທຸລະກິດ	:	1. ຜະລິດໄຟຟ້າເພື່ອຂາຍຍົກໃຫ້ກັບ ຟຟລ ແລະ ລວມ ທັງດຳເນີນການພັດທະນາລະບົບສາຍສົ່ງ ແລະ ສະຖານີໄຟຟ້າຫາກມີຄວາມຈຳເປັນ; 2. ລົງທຶນ ຫຼື ຮ່ວມທຶນ ໃນໂຄງການຜະລິດໄຟຟ້າອື່ນໆ; 3. ໃຫ້ບໍລິການໃນການບໍລິຫານ ແລະ ບາລຸງຮັກສາ ໂຄງການຜະລິດໄຟຟ້າອື່ນໆ.
ວັນທີສ້າງຕັ້ງ	:	15 ທັນວາ 2010
ສັນຍາລັກ	:	ຜ-ຟຟລ
ສຳນັກງານໃຫຍ່	:	ຊັ້ນ 7, ສຳນັກງານໃຫຍ່ຕຶກອາຄານບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ,ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ ສປປ ລາວ
ໃບທະບຽນວິສາຫະກິດເລກທີ	:	651/ຈທວ
ເລກປະຈຳຕົວຜູ້ເສຍອາກອນ	:	502956560-9-00
ທຶນຈົດທະບຽນ	:	6.717.214.788.000 ກີບ
ມູນຄ່າກຳນົດຮຸ້ນລະ	:	4.000 ກີບ
ຈຳນວນຮຸ້ນ	:	1.679.303.697 ຮຸ້ນ
ເວັບໄຊ	:	http://www.edlgen.com.la
ໂທລະສັບ	:	(+856-21) 316-142
ແຟັກ	:	(+856-21) 316-141

2. ປະຫວັດຄວາມເປັນມາຂອງບໍລິສັດ:

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາໃຫ້ ຜ-ຟຟລ, ຊຶ່ງ ປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນ ໄຟຟ້າເຊເສັດ 2, ເຂື່ອນໄຟຟ້ານ້ຳແຊລະບາ ແລະ ເຂື່ອນໄຟຟ້າຊອງ, ລວມມີກຳລັງຕິດຕັ້ງທັງໝົດ 387 MW; ພ້ອມ ດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະ ພະນັກງານສຳນັກງານໃຫຍ່ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ່ມທຶນດ້ວຍການອອກຮຸ້ນຄັ້ງທຳ

ອິດ (IPO) ດ້ວຍຈຳນວນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວ ເພື່ອຈຳໜ່າຍຮຸ້ນໃນຕະຫຼາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ສັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອື່ນ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນການປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນແບບສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ ແລະ ແບບສະເໜີຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງປະກອບມີ: ເຂື່ອນໄຟຟ້າເທີນຫິນບູນ (60%), ເຂື່ອນໄຟຟ້າງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມສັດສ່ວນການຖືຮຸ້ນ) ເຮັດໃຫ້ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ມີຕົວເລກ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດທະບຽນເປັນເງິນ 4.904.867.060.000 ກີບ ແລະ ມີຮຸ້ນທັງໝົດ 1.226.216.765 ຮຸ້ນ ຊັດສ່ວນການຖືຮຸ້ນຍັງຮັກສາເໜືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການຈັດລຳດັບຄວາມເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+ , ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກ ເພື່ອຂະຫຍາຍກຳລັງຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອື່ນ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດປີ 2015, ຜ-ຟຟລ ໄດ້ຮັບການໂອນຮຸ້ນຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການຂະຫຍາຍກຳລັງຕິດຕັ້ງຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ສັດສ່ວນການຖືຮຸ້ນຍັງຮັກສາເໜືອນເດີມ.

ໃນວັນທີ 24 ທັນວາ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 02 ກັນຍາ 2016, ຜ-ຟຟລ ໄດ້ອອກຮຸ້ນກູ້ເປັນເງິນໂດລາສະຫະລັດທີ່ປະເທດໄທ ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບຳພາກຂະຫຍາຍ, ໂຄງການເຊເສັດ 2

ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫະລັດ.

ວັນທີ 14 ທັນວາ 2017 ໄດ້ສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີເອວເຈັນ ຈຳກັດຜູ້ດຽວ.

ວັນທີ 18 ມັງກອນ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳແບ່ງ (10%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 3,4 MW, ວັນທີ 04 ກຸມພາ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງເຂື່ອນໄຟຟ້າດອນສະໂຮງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 52 MW. ໃນວັນທີ 13 ກໍລະກົດ 2018, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດ ທີ່ປະເທດໄທ ຊຶ່ງສາມາດຂາຍໄດ້ 13.666,40 ລ້ານບາດ ເພື່ອລົງທຶນເຂົ້າໃນການຊື້ຮຸ້ນ ຂອງ ໂຄງການເຂື່ອນໄຟຟ້າໄຊຍະບູລີ ແລະ ດອນສະໂຮງ. ໃນວັນທີ 22 ສິງຫາ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳລອງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 1 MW ແລະ ໂຮງງານຜະລິດໄຟຟ້າພະລັງງານແສງຕາເວັນ (60%) ຕາມສັດສ່ວນ ຜ-ຟຟລ ຖືຮຸ້ນເທົ່າກັບ 19,2 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 1.206,6 MW ສັດສ່ວນການຖືຮຸ້ນຍັງຮັກສາເໝືອນເດີມ.

ປີ 2019, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າໄຊຍະບູລີ ໃນວັນທີ 19 ມີນາ 2019 ຕາມສັດສ່ວນ ທີ່ ຟຟລ ຖືຮຸ້ນ 20% ເທົ່າກັບກຳລັງການຕິດຕັ້ງ 257 MW; ໃນເດືອນພຶດສະພາ 2019, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງ ເຂື່ອນໄຟຟ້ານ້ຳມັງ 1 ຕາມສັດສ່ວນ ຟຟລ ຖືຮຸ້ນ 10% ເທົ່າກັບ 6,4 MW ແລະ ເຂື່ອນໄຟຟ້ານ້ຳອູ 2, 5 ແລະ 6 ດ້ວຍສັດສ່ວນທີ່ ຟຟລ ຖືຮຸ້ນ 15% ເທົ່າກັບ 18 MW, 36 MW ແລະ 27 MW ຕາມລຳດັບ ເຮັດໃຫ້ ຜ-ຟຟລ ມີກຳລັງການຕິດຕັ້ງເພີ່ມຂຶ້ນ 1.552 MW.

3. ປະເພດທຸລະກິດ:

- ຜະລິດໄຟຟ້າເພື່ອຂາຍຍົກໃຫ້ກັບ ຟຟລ ແລະ ລວມທັງດຳເນີນການພັດທະນາລະບົບສາຍສົ່ງ ແລະ ສະຖານີໄຟຟ້າຫາກມີຄວາມຈຳເປັນ;
- ລົງທຶນ ຫຼື ຮ່ວມທຶນ ໃນໂຄງການຜະລິດໄຟຟ້າອື່ນໆ;
- ໃຫ້ບໍລິການໃນການບໍລິຫານ ແລະ ບຳລຸງຮັກສາໂຄງການຜະລິດໄຟຟ້າອື່ນໆ.

4. ການລົງທຶນຂອງບໍລິສັດ:

- **Wholly owned**

Item	Name	Location (Province)	Capacity MW	Annual Energy GWh
1	Nam Ngum1	Vientiane Province	155	1.025
2	Nam Khan 2	Luang Prabang	130	558
3	Houay LamphanGnai	sekong	88	480

4	Xeset 2	Salavan	76	309
5	Nam Leuk	Xaysoomboun	60	215
6	Xeset 1	Salavan	45	180
7	Nam Mang 3	Vientiane Province	40	138
8	Nam Sana	Vientiane Province	14	49,55
9	Nam Song	Vientiane Province	6	13,5
10	Selabum	Champasak	5,04	25

- **Joint venture**

Item	Name	Location (Province)	Capacity MW	Annual Energy GWh
1	NAMLONG	Luang nam tha	5	37
2	NAM BENG	Oudomxay	34	136
3	Nam Ngum 2	Vientiane Province	615	2.310
4	XAYABOURI	Xayabury	1.285	7.370
5	Nam Lik 1-2	Vientiane Province	100	435
6	NAM MANG 1	Xaysomboun	64	224
7	Theun Hinboun	Bolikhamxay	520	-
8	DONGSAHONG	Champasack	260	2.028
9	Houay Ho	Attapue	152,1	450
10	Nam Ngum 5	Xiengkuoang	120	421
11	NAM Ou 2	Luangprabang	120	502
12	NAM Ou 5	Phongsaly	240	1.049
13	NAM Ou 6	Phongsaly	180	739

- **Solar Power**

Item	Name	Location (Province)	Capacity MW	Annual Energy GWh
1	EDL-Gen Solar Power	Vientiane Capital	100	-

ໝາຍເຫດ: ຍົດລາຍງານປະຈຳປີຂອງບໍລິສັດ

5. ລາຍຊື່ 11 ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດກ່ອນການສະເໜີຊື້ຮຸ້ນ:

ລຳດັບ	ຜູ້ຖືຮຸ້ນ	ຈຳນວນຮຸ້ນ	(%)
1	ELECTRICITE DU LAOS	1.259.477.773	75,00
2	RATCH-LAO SERVICES COMPANY LIMITED	94.712.729	5,64
3	RH INTERNATIONAL (SINGAPORE) CORPORATION PTE.LTD	38.288.124	2,28
4	BANQUE POUR LE COMMERCE EXTERIEUR LAO	25.861.277	1,54
5	KRUNG THAI BANK PUBLIC COMPANY LIMITED	25.861.277	1,54
6	DRAGON CAPITAL CLEAN DEVELOPMENT LTD.	12.090.987	0,72
7	SENGLATY SAVANHKHAM	11.587.196	0,69
8	PT SOLE CO.LTD	10.411.683	0,62
9	GULF INTERNATIONAL INVESTMENT HONG KONG LIMITED	7.724.797	0,46
10	BANGKOK LIFE ASSURANCE PUBLIC COMPANY LIMITED	6.717.215	0,40
11	Other	186.570.641	11,11
	ລວມທັງໝົດ	**1.679.303.697**	**100**

ໝາຍເຫດ: ວັນທີ 10 ກໍລະກົດ 2020.

6. ລາຍຊື່ 12 ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດພາຍຫຼັງການສະເໜີຊື້ຮຸ້ນ:

ລໍາດັບ	ຜູ້ຖືຮຸ້ນ	ຈໍານວນຮຸ້ນ	(%)
1	ELECTRICITE DU LAOS	856.444.886	51,00
2	Phongsubthavy Road, Building and Irrigation Construction Sole Co., Ltd	403.032.887	24,00
3	RATCH-LAO SERVICES COMPANY LIMITED	94.712.729	5,64
4	RH INTERNATIONAL (SINGAPORE) CORPORATION PTE.LTD	38.288.124	2,28
5	BANQUE POUR LE COMMERCE EXTERIEUR LAO	25.861.277	1,54
6	KRUNG THAI BANK PUBLIC COMPANY LIMITED	25.861.277	1,54
7	DRAGON CAPITAL CLEAN DEVELOPMENT LTD.	12.090.987	0,72
8	SENGLATY SAVANHKHAM	11.587.196	0,69
9	PT SOLE CO.LTD	10.411.683	0,62
10	GULF INTERNATIONAL INVESTMENT HONG KONG LIMITED	7.724.797	0,46
11	BANGKOK LIFE ASSURANCE PUBLIC COMPANY LIMITED	6.717.215	0,40
12	Other	186.570.641	11,11
	ລວມທັງໝົດ	**1.679.303.697**	**100**

7. ສະພາບໍລິຫານ:

ລາຍຊື່	ຕໍາແໜ່ງ
ທ່ານ ປອ. ຄໍາມະນີ ອິນທິລາດ	ປະທານ
ທ່ານ ຈັນທະບູນ ສຸກອາລຸນ	ຮອງປະທານ
ທ່ານ ດວງສີ ພາຣະຍົກ	ຜູ້ອໍານວຍການ
ທ່ານ ຄໍາເພັງ ທິນນະກອນ	ຜູ້ອໍານວຍການ
ທ່ານ ສົມພິດ ແກ້ວວິຈິດ	ຜູ້ອໍານວຍການ
ທ່ານ ໂກມົນຈັນ ເພັດອາສາ	ຜູ້ອໍານວຍການ
ທ່ານ ຄໍາແກ້ວ ວິສີສົມບັດ	ຜູ້ອໍານວຍການອິດສະຫຼະ
ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ	ຜູ້ອໍານວຍການອິດສະຫຼະ
ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ	ຜູ້ອໍານວຍການອິດສະຫຼະ

ໝາຍເຫດ: ບົດລາຍງານປະຈໍາປີຂອງບໍລິສັດ

8. ຜົນການດຳເນີນງານ ແລະ ຂໍ້ມູນຖານະທາງການເງິນ:

- **ໃບສະຫຼຸບຊັບສິມບັດ**

ໃບລາຍງານຖານະການເງິນ	2017	2018	2019
	ລ້ານກີບ	ລ້ານກີບ	ລ້ານກີບ
ຄ່າໃຊ້ຈ່າຍໃນການການສ້າງຕັ້ງບໍລິສັດ, ສຸດທິ	-	-	
ເງິນລົງທຶນໃນວິສາຫະກິດ	-	1.774.819	4.901.466
ເງິນລົງທຶນໃນບໍລິສັດຮຸ້ນສ່ວນ	2.606.394	2.034.455	2.689.126
ເງິນລົງທຶນຈ່າຍລ່ວງໜ້າ	4.436.159	6.298.672	2.217.880
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນອັດຕາດອກເບ້ຍ	36.058	22.455	11.963
ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ	9.790.198	9.735.008	9.841.857
ຊັບສິນຄົງທີ່ບໍ່ມີຕົວຕົນ	-	-	863
ໜີ້ຕ້ອງຮັບສັນຍາແລກປ່ຽນ Swap	-	26.617	178.689
ຈ່າຍເງິນລ່ວງໜ້າໃຫ້ຜູ້ສະໜອງສຳລັບໂຄງການກໍ່ສ້າງ	183.680	341.075	341.075
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ້ຳປະກັນ	-	97.801	101.581
ຊັບສິນບໍ່ໝຸນວຽນອື່ນໆ	72.872	4.488	2.461
ລວມຊັບສິນບໍ່ໝຸນວຽນ	**17.125.361**	**20.335.390**	**20.286.961**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	756.738	642.106	979.774
ເງິນລົງທຶນໄລຍະສັ້ນ	955.301	110.994	26.604
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	463.392	486.666	454.042
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	149.452	429.439	565.802
ສ່ວນທີ່ເຖິງກຳນົດຈ່າຍເງິນຈ່າຍລ່ວງໜ້າສຳລັບ ສັນຍາແລກປ່ຽນອັດຕາດອກເບ້ຍ	14.581	14.785	11.373
ເຄື່ອງໃນສາງ, ສຸດທິ	4.458	3.941	4.171
ໜີ້ຕ້ອງຮັບອື່ນໆ	149.910	529.850	1.327.651
ລວມຊັບສິນໝຸນວຽນ	**2.493.832**	**2.217.781**	**3.369.417**
ລວມຊັບສິນ	**19.619.193**	**22.553.171**	**23.656.378**
ທຶນຂອງຜູ້ຖືຮຸ້ນ	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ	985.621	985.621	985.621
ຄັງສະສົມຕາມລະບຽບການ	463.944	526.392	547.147
ຜົດຕ່ຽງຂອງການແປງຄ່າເອກະສານລາຍງານເງິນ	2.302	12.611	20.220
ກຳໄລສະສົມ	1.040.000	1.111.354	1.014.989
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄອບຄຸມ	(263)	676	5.213
ລວມສ່ວນຜູ້ຖືຮຸ້ນ	**9.208.819**	**9.353.869**	**9.290.405**

ເງິນກູ້ຢືມໄລຍະຍາວ, ສຸດທິ	4.206.348	3.678.445	3.361.782
ຮຸ້ນກູ້	4.152.882	7.532.621	9.370.051
ໜີ້ຕ້ອງສິ່ງສັນຍາ Swap	3.856	-	
ລວມໜີ້ສິນບໍ່ໝຸນວຽນ	**8.363.086**	**11.211.066**	**12.731.833**
ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	-	624.754	123.328
ເງິນກູ້ຢືມໄລຍະສັ້ນ	870.573	195.843	201.972
ໜີ້ຕ້ອງສິ່ງຜູ້ສະໜອງ	535.079	588.286	946.856
ໜີ້ຕ້ອງສິ່ງສຳລັບຊັບສິມບັດທີ່ຢູ່ພາຍໃຕ້ການສຳປະທານ	-	-	-
ເງິນກູ້ຍືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	529.912	-	-
ຮຸ້ນກູ້ສຸດທິ		401.145	-
ໜີ້ຕ້ອງສິ່ງອື່ນໆ	111.222	176.496	360.701
ໜີ້ຕ້ອງສິ່ງອາກອນລາຍໄດ້	-	-	-
ໜີ້ສິນໝຸນວຽນອື່ນໆ	502	1.712	1.283
ລວມໜີ້ສິນໝຸນວຽນ	**2.047.288**	**1.988.236**	**1.634.140**
ລວມໜີ້ສິນ	**10.410.374**	**13.199.302**	**14.365.973**
ລວມທຶນ ແລະ ໜີ້ສິນ	**19.619.193**	**22.553.171**	**23.656.378**

- **ໃບລາຍງານຜົນໄດ້ຮັບ**

ໃບລາຍງານຜົນໄດ້ຮັບ	**2017**	**2018**	**2019**
	ລ້ານກີບ	**ລ້ານກີບ**	**ລ້ານກີບ**
ຂາຍ	1.219.825	1.137.430	1.217.530
ຕົ້ນທຶນການຂາຍ	(489.057)	(532.735)	(582.870)
ກຳໄລຂັ້ນຕົ້ນ	**730.768**	**604.695**	**634.660**
ລາຍໄດ້ອື່ນໆ	25.710	26.476	31.270
ຄ່າໃຊ້ຈ່າຍບໍລິຫານ	(140.850)	(169.215)	(154.849)
ກຳໄລ(ຂາດທຶນ)ຈາກອັດຕາແລກປ່ຽນ	(47.301)	(29.050)	71.524
ເງິນປັນຜົນຈາກບໍລິສັດຮຸ້ນສ່ວນ	410.703	626.001	339.377
ກຳໄລຈາກການດຳເນີນງານ	**979.030**	**1.058.907**	**921.982**
ລາຍຈ່າຍດອກເບ້ຍ	(491.902)	(588.553)	(724.366)
ກຳໄລກ່ອນອາກອນ	**487.128**	**470.354**	**197.616**
ອາກອນ	(15.943)	-	-
ກຳໄລສຸດທິ	**471.185**	**470.354**	**197.616**

- **ໃບລາຍງານກະແສເງິນສົດ**

ໃບລາຍງານກະແສເງິນສົດ	2017	2018	2019
	ລ້ານກີບ	ລ້ານກີບ	ລ້ານກີບ
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ	1.407.013	320.529	530.639
ເງິນສົດສຸດທິຈາກກິດຈະກຳການລົງທຶນ	(2.659.343)	(1.944.232)	167.416
ເງິນສົດສຸດທິຈາກກິດຈະກຳການເງິນ	(243.528)	1.471.558	(337.302)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	**756.738**	**642.106**	**979.774**

- **ອັດຕາສ່ວນການເງິນທີ່ສຳຄັນ**

ອັດຕາສ່ວນທາງການເງິນທີ່ສຳຄັນ	2017	2018	2019
ຜົນຕອບແທນຕໍ່ຊັບສິນລວມ (%)	2,40	2,09	0,84
ຜົນຕອບແທນຕໍ່ທຶນທັງໝົດ (%)	5,12	5,03	2,13
ອັດຕາກຳໄລຂັ້ນຕົ້ນ (%)	59,91	53,16	52,13
ອັດຕາກຳໄລສຸດທິ(%)	38,63	41,35	16,23
ເງິນປັນຜົນຕໍ່ຮຸ້ນ (ກີບ)	290	270	100
ໜີສິນຕໍ່ທຶນ (ເທົ່າ)	1,13	1,41	1,55
ໜີສິນຕໍ່ຊັບສິນ (ເທົ່າ)	0,53	0,59	0,61

ໝາຍເຫດ: ເອກະສານລາຍງານການເງິນແບບລວມກິດຈະການ ປະຈຳປີ 2017-2019.

ຜູ້ອຳນວຍການ

ບໍລິສັດ ຫລັກຊັບ ລ້ານຊ້າງ ມະຫາຊົນ LANE XANG SECURITIES PUBLIC COMPANY

ທ່ານ ອານຸກອນ ສຸທຳມະວົງ

(ບໍລິສັດທີ່ປຶກສາດ້ານການເງິນ)

ປະທານບໍລິສັດ

ບໍລິສັດ, ພິງຊັບທະວີ ກ່ຳ້ງ ຂ໋ວທາງ,ເຄຫາສະຖານ ແລະຊົ່ນລະປະທານ ຈຳກັດຜູ້ດຽວ

ທ່ານ ພິງສະຫວັດ ເສນາພອນ

(ຜູ້ຍື່ນສະເໜີຂໍຊື້ຮຸ້ນ)